# ໂຮງຮຽນວັນອາທິດ

**ວັນອາທິດ ທີ 10 ເດືອນກໍລະກະດາ 2022 (07-10-2022)**

---

## ເດີນກັບພຣະວິນຍານ

*ປະສົບການໃນວັຍເດັກອັນໃດທີ່ເຮັດໃຫ້ທ່ານຮູ້ຄວາມສໍາຄັນຂອງຄຸນສົມບັດ?*

**ຈຸດສໍາຄັນໃນບົດຮຽນ:** ພຣະວິນຍານບໍຣິສຸດຊ່ວຍນໍາພາພວກເຮົາໃຫ້ສະທ້ອນໃຫ້ເຫັນໝາກຜົນຄຸນລັກສະນະຂອງພຣະເຈົ້າ.
**ພຣະຄັມພີຕອບສນອງຕໍ່ຊີວິດ:**
ໃນບົດຄວາມອອນລາຍ, ຈິມ ຣອນ (**Jim Rohn**) ໄດ້ກໍານົດ "6 ລັກສະນະທີ່ສໍາຄັນຂອງຄຸນສົມບັດທີ່ດີ." ຄຸນສົມບັດທີ່ລາວລະບຸໄວ້ມີຄວາມສັກສີ, ຄວາມສັດຊື່, ຄວາມຈົງຮັກພັກດີ, ການເສັຽສລະ, ຄວາມຮັບຜິດຊອບ, ແລະການຮູ້ຈັກຄວບຄຸມຕົນເອງ, ສິ່ງເຫຼົ່ານີ້ແມ່ນຄຸນສົມບັດທີ່ດີທີ່ສອດຄ່ອງກັບລັກສະນະແນວຄວາມຄິດຂອງພຣະຄັມພີ, ຢ່າງໃດກໍຕາມ, ໃນຂນະທີ່ບົດຄວາມຂອງລາວອະທິບາຍວ່າຄຸນສົມບັດເຫຼົ່ານີ້ແມ່ນຫັຽງແລະເປັນຫັຽງພວກມັນຈຶ່ງມີຄວາມສໍາຄັນ, ລາວບໍ່ແນະນໍາອັນໃດກ່ຽວກັບວິທີການພັດທະນາຄຸນສົມບັດເຫຼົ່ານີ້ຫຼືຄຸນລັກສະນະທີ່ດີນີ້.

ບາງທີ ຣອນ (**Rohn**) ຄິດວ່າເປັນການງ່າຍໃນການພັດທະນາຄຸນສົມບັດ. ລາວອາດຈະເຫັນພ້ອມກັບ ໂຍດາ (**Yoda**) ຈາກ ຊະຕາຣ໌ ວໍ (**Star Wars**): "ເຮັດຫຼືບໍ່ເຮັດ; ບໍ່ມີການລອງເບິ່ງ." ອັນນັ້ນອາດຈະໃຊ້ໄດ້ກັບ ລູກາ ຊະຕາຣ໌ວອກເກີ (**Luke Skywalker)** ໃນເຣື່ອງນະວະນິຍາຍ, ແຕ່ໃນຄວາມເປັນຈິງເຮັດໃຫ້ພວກເຮົາໄດ້ຢ່າງດຽວກັນກັບອັຄສາວົກໂປໂລວ່າ: "ເຮົາບໍ່ເຂົ້າໃຈໃນສິ່ງທີ່ເຮົາເຮັດຢູ່, ເພາະເຮົາບໍ່ໄດ້ເຮັດຕາມສິ່ງທີ່ເຮົາປາຖນາ ແຕ່ເຮົາກັບໄປເຮັດໃນສິ່ງທີ່ເຮົາກຽດຊັງນັ້ນ." (ໂຣມ 7:15).

ພວກເຮົາເຂົ້າໃຈຄວາມສໍາຄັນຂອງຄຸນສົມບັດ. ແຕ່ການເປັນບຸກຄົນທີ່ມີຄຸນສົມບັດທີ່ດີເໝາະສົມນັ້ນແມ່ນຖືກທໍາລາຍລົງ. ພວກເຮົາຈະເຮັດຢ່າງໃດ? ໃນ ຄາລາເຕັຽບົດ 5, ໂປໂລໄດ້ກ່າວໄວ້ວ່າແມ່ນແຕ່ກົດໝາຍກໍບໍ່ສາມາດປ່ຽນແປງລັກສະນະຂອງບຸກຄົນໄດ້. ເພື່ອຈະດໍາເນີນຊີວິດດ້ວຍຄຸນສົມບັດທີ່ຖືກຕ້ອງ-ຄຸນສົມບັດຂອງພຣະເຈົ້າ-ພວກເຮົາຈະຕ້ອງມີຄຸນສົມບັດຂອງພຣະເຈົ້າທີ່ສະທ້ອນອອກມາຈາກຂ້າງໃນສູ່ພາຍນອກ.
**ພຣະຄໍາພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3, )

**<u>ສຶກສາພຣະຄັມພີ</u>**

### 1. ຄາລາເຕັຽ 5:16-18

*16 ແຕ່ເຮົາຂໍບອກວ່າ ຈົ່ງຍອມໃຫ້ພຣະວິນຍານເປັນຜູ້ຊົງນໍາພາ ແລະເຈົ້າທັງຫຼາຍຈະບໍ່ໄດ້ເຮັດຕາມຕັນຫາຂອງມະນຸດ. 17 ເພາະ*
*ວ່າມະນຸດທໍາມະດາມີຕັນຫາຕໍ່ສູ້ກັບພຣະວິນຍານ ແລະພຣະວິນຍານກໍຕໍ່ສູ້ກັບມະນຸດ ເພາະທັງສອງຝ່າຍເປັນສັດຕູກັນ ດັ່ງນັ້ນສິ່ງທີ່*
*ເຈົ້າທັງຫຼາຍຢາກເຮັດ ພວກເຈົ້າຈຶ່ງເຮັດບໍ່ໄດ້. 18 ແຕ່ຖ້າພຣະວິນຍານຊົງນໍາພາເຈົ້າທັງຫຼາຍໄປ ພວກເຈົ້າກໍບໍ່ຢູ່ໃຕ້ພຣະບັນຍັດ.*

ກຸນແຈທີ່ສໍາຄັນຕໍ່ຄຸນລັກສະນະຂອງພຣະເຈົ້າຄື "ການເດີນກັບພຣະວິນຍານບໍຣິສຸດ." ຄໍາວ່າການເດີນມັກຈະຖືກນໍາໃຊ້ເປັນຄໍາປຽບທຽບສໍາລັບການດໍາເນີນຊີວິດຄຣິສຕຽນ, ຫຼືດັ່ງທີ່ ມາຍໂກ ກາຍເຄັນດໍ Michael Kuykendall ໄດ້ຂຽນ, "ຄໍາອະທິບາຍກ່ຽວກັບການດໍາເນີນຊີວິດຂອງຄົນໆນຶ່ງທີ່ມີຄວາມສໍາພັນກັບພຣະເຈົ້າ." ດັ່ງນັ້ນ, ການເດີນຕາມພຣະວິນຍານຈຶ່ງເປັນການແນະນໍາການດໍາເນີນຊີວິດທີ່ມີຊີວິດທີ່ຜູກພັນກັບພຣະເຈົ້າໂດຍຜ່ານທາງພຣະວິນຍານບໍຣິສຸດ. ດັ່ງນັ້ນ, ພວກສາວົກທີ່ເຄີຍໃຊ້ຊີວິດຢູ່ຮ່ວມກັບພຣະເຢຊູ, ໃນປະຈຸບັນຜູ້ທີ່ເຊື່ອທຸກຄົນສາມາດເດີນກັບພຣະວິຍານບໍຣິສຸດ.

ທ່ານໂປໂລໃຊ້ຄໍາເວົ້າສີ່ຄໍາທີ່ຄ້າຍຄືກັນໃນຄາລາເຕັຽບົດ 5. ຄືກັນກັບພວກເຮົາທີ່ຈະ "ເດີນໃນທາງພຣະວິນຍານ," ພວກເຮົາຕ້ອງ "ນໍາພາໂດຍພຣະວິນຍານ," "ດໍາເນີນຊີວິດໂດຍພຣະວິນຍານ" ( ຂໍ້ 25), ແລະ "ຄຸ້ມຄອງຮັກສາໂດຍພຣະວິນຍານ" ( ຂໍ້ 25). ຊຶ່ງ

ເນັ້ນໜັກໃສ່ການຟັງພຣະວິນຍານແລະການເຮັດຕາມການຊີ້ນຳຂອງພຣະອົງ. ກົງກັນຂ້າມກັບການປະຕິບັດຕາມກົດບັນຍັດຂອງຊາວຢິວຢ່າງເຂັ້ມງວດ, ໂປໂລໄດ້ເນັ້ນໜັກວ່າມີຄວາມສຳພັນທີ່ກະຕຸ້ນໃຫ້ພວກເຮົາປະຕິບັດຕາມພຣະວິນຍານບໍລິສຸດ. ມີພຽງແຕ່ການເດີນໄປກັບພຣະວິນຍານເທົ່ານັ້ນທີ່ຈະເຮັດໃຫ້ພວກເຮົາມີຄວາມຫວັງທີ່ຈະເອົາຊະນະ "ຄວາມປາຖະໜາຂອງເນື້ອໜັງໄດ້." ໂດຍເນື້ອໜັງໂປໂລໝາຍຄວາມວ່າຫຼາຍກວ່າຮ່າງກາຍ. ໂປໂລໃຊ້ຄຳເວົ້າເຫຼົ່ານີ້ເລື້ອຍໆໃນການຂຽນຂອງທ່ານເພື່ອອ້າງເຖິງລັກສະນະຂອງບາບທີ່ພວກເຮົາເກີດມາ (ໂຣມ 7:5, 18; 8:3-9; ຄາລາເຕັຽ 3:3). ເຫດນັ້ນ, "ເນື້ອໜັງ…ແລະພຣະວິນຍານ" ແມ່ນຕໍ່ສູ້ກັນຢູ່ພາຍໃນຜູ້ທີ່ເຊື່ອ, ຄວາມປາຖະໜາຂອງເນື້ອໜັງແລະຄວາມປາຖະໜາຂອງພຣະວິນຍານບໍ່ພຽງແຕ່ແຕກຕ່າງກັນເທົ່ານັ້ນ, ມັນ "ຍັງຂັດແຍ້ງກັນ"-ມັນບໍ່ເຂົ້າກັນ. ໃນປະໂຍກສຸດທ້າຍຂໍ້ 17, "ເຈົ້າບໍ່ໄດ້ເຮັດໃນສິ່ງທີ່ເຈົ້າຕ້ອງການ," ຖືກຕີຄວາມໝາຍໂດຍລາງຄົນວ່າ, ຖ້າເຈົ້າຢາກເຮັດຕາມຄວາມປາຖະໜາຂອງເນື້ອໜັງ, ພຣະວິນຍານຈະບໍ່ອະນຸຍາດໃຫ້ທ່ານເຮັດແນວນັ້ນ. ແນວໃດກໍຕາມ, ມັນເປັນການດີທີ່ສຸດທີ່ຈະຕີຄວາມໝາຍນີ້ຈາກທັສນະທີ່ເຈົ້າຕ້ອງການເຮັດໃນສິ່ງທີ່ພຣະເຈົ້າປາຖະໜາໃຫ້ເຮັດ, ແຕ່ເນື້ອໜັງຂອງເຈົ້າຊັກຈູງເຈົ້າໃຫ້ເຮັດບາບ.

*ທ່ານຈະບັນລະຍາຍກ່ຽວເຣື່ອງການຕໍ່ສູ້ແຕ່ລະມື້ລະຫວ່າງເນື້ອໜັງແລະພຣະວິນຍານແນວໃດ?*

ໂປໂລຢາກໃຫ້ຜູ້ເຊື່ອຮູ້ວ່າພວກເຮົາຍັງຈະຕໍ່ສູ້ກັບຄວາມບາບຢູ່. ຕາບໃດທີ່ພວກເຮົາຍັງອາສັຍຢູ່ໃນໂລກນີ້, ພວກເຮົາຈະບໍ່ຈົບສິ້ນກັບການຕໍ່ສູ້ກັບບາບ. ພວກເຮົາຈະບໍ່ມີໄຊຊະນະໃນການຕໍ່ສູ້ກັບບາບດ້ວຍການພະຍາຍາມຢ່າງສຸດກຳລັງທີ່ຄວບຄຸມເນື້ອໜັງຂອງພວກເຮົາ, ແຕ່ດ້ວຍຊີວິດທີ່ຢູ່ໃນພຣະວິນຍານ. ເມື່ອພຣະວິນຍານຊົງ "ນຳພາຊີວິດຂອງພວກເຮົາ" ພວກເຮົາຈຶ່ງຫຼີກລ້ຽງຄວາມລົ້ມເຫຼວໃນບາບ.

ຄຳຖາມກໍຄື, ພວກເຮົາຈະເດີນຕາມພຣະວິນຍານແນວໃດ? ເມື່ອໂປໂລໄດ້ຂຽນໜັງສືໄປເຖິງຜູ້ທີ່ເຊື່ອໃນເມືອງໂກໂລຊາຍ, ທ່ານໄດ້ກ່າວວ່າ "ຈົ່ງເອົາໃຈໃສ່ສິ່ງຊຶ່ງຢູ່ເບື້ອງເທິງບໍ່ໃຊ້ຊຶ່ງຢູ່ໃນແຜ່ນດິນໂລກນີ້" (ໂກໂລຊາຍ 3:2). ເມື່ອຈິດວິນຍານຂອງເຮົາຜູກພັນຢູ່ກັບສິ່ງຂອງໃນໂລກນີ້, ມັນເປັນອຸປະສັກໃນການເດີນໄປກັບພຣະວິນຍານບໍຣິສຸດ. ໃນທາງກົງກັນຂ້າມ, ເມື່ອພວກເຮົາສົນໃຈໃສ່ກ່ຽວກັບ, ການມີຊີວິດຢູ່ແລະຄວາມຫວັງໃນເຣື່ອງອານາຈັກຂອງພຣະເຈົ້າ, ພວກເຮົາຈະພົບວ່າພຣະວິນຍານໄດ້ນຳພາຊີວິດຂອງພວກເຮົາງ່າຍຂຶ້ນ. ການລົງຕົວໃນຄວາມເຂົ້າໃຈໃນພຣະຄັມພີຈະມີວິທີຊຸກຍູ້ສິ່ງຂອງໂລກນີ້ອອກ!

## 2. ຄາລາເຕັຽ 5:19-21

*19 ແຕ່ການງານຂອງມະນຸດທຳມະດານັ້ນກໍປະກົດແຈ້ງແລ້ວ ຄື ການຫລິ້ນຊູ້, ການບໍ່ສະອາດ, ການລ່ວງປະເວນີ, ການໂລພະຕັນຫາ, 20 ການໄຫວ້ພຣະທຽມ, ການເຊື່ອເວດມົນຄາຖາ, ການເປັນສັດຕູກັນ, ການວິວາດຜິດຖຽງກັນ, ການເຫິງສາກັນ, ການຄຽດແຄ້ນກັນ, ການໃຝ່ສູງຕໍ່ກັນ, ການແຕກແຍກກັນ, ການຖືພັກຖືພວກ, 21 ການອິດສາກັນ, ການຂ້າກັນ, ການເສບສຸລາຢາເມົາ, ການກິນລ້ຽງຢ່າງຊົ່ວຊ້າ, ແລະການອື່ນໆ ໃນທຳນອງນີ້ອີກ ເຮົາຂໍເຕືອນເຈົ້າທັງຫຼາຍເໝືອນກັບເຮົາໄດ້ເຕືອນພວກເຈົ້າລ່ວງໜ້າແລ້ວວ່າຄົນທີ່ຍັງເຮັດການຢ່າງນັ້ນຈະບໍ່ມີສ່ວນໃນຣາຊອານາຈັກຂອງພຣະເຈົ້າ.*

ໂປໂລໄດ້ສະແດງໃຫ້ເຫັນຄວາມແຕກຕ່າງລະຫ່ວາງເນື້ອໜັງແລະພຣະວິນຍານໂດຍການກຳນົດລາຍລະອຽດຂອງການກະທຳແລະທັດສະນະທີ່ເປັນລັກສະນະຂອງແຕ່ລະອັນ. ທ່ານໄດ້ເລີ້ມຕົ້ນດ້ວຍ "ການທຳງານຂອງເນື້ອໜັງ" ແລະສັງເກດເຫັນວ່າການງານເຫຼົ່ານີ້ "ປາກົດແຈ້ງ." ພວກເຮົາສາມາດແບ່ງການງານຂອງເນື້ອໜັງເຫຼົ່ານີ້ອອກເປັນຫ້າກຸ່ມ.

1. **ບາບທາງເພດ.** ສິ່ງເຫຼົ່ານີ້ລວມເຖິງ "ການເຮັດຜິດສິລທັມທາງເພດ ການຂາດສິນທັມ (ແລະ) ຄວາມຫຼົງໄຫຼ." ການຜິດສິລທັມທາງເພດແມ່ນຄຳສັບທົ່ວໄປທີ່ກ່າວເຖິງການສົມສູ່ທາງເພດທີ່ຜິດກົດໝາຍ. ຄຳວ່າ "ບໍ່ສະອາດທາງສິນທັມ" ໝາຍຄວາມວ່າ "ບໍ່ສະອາດ." ຄຳສັບທີ່ໄດ້ແປຄວາມຫຼົງໄຫຼນີ້ຍັງສາມາດແປໄດ້ວ່າ "ອາລົມຈິດ" ຫຼື "ຄວາມລາມົກ."
2. **ຄວາມບໍ່ສັດຊື່ທາງຈິດວິນຍານ.** ເມື່ອຄົນເຮົາໃຫ້ການ "ບູຊາພຣະທຽມ" ແລະ "ເວດມົນຄາຖາ," ເຂົາຊອກຫາສິ່ງອື່ນມາເປັນພຣະເຈົ້າຂອງເຂົາ. ການບູຊາພຣະທຽມເກີດຂຶ້ນເມື່ອເຮົາໃຫ້ສິ່ງນັ້ນມາກ່ອນພຣະເຈົ້າ. ຄຳສັບທີ່ແປວ່າເວດມົນຄາຖາແມ່ນໄສ

ຍະສາດ (Pharmakia) ທີ່ພວກເຮົາໄດ້ຮັບຈາກຄຳວ່າຮ້ານຂາຍຢາ. ໃນເວດມົນຄາຖານີ້, ແມ່ນການໃຊ້ຢຸກຢາຕ່າງໆ. ບໍ່ວ່າຈະເປັນສິ່ງງ່າຍດາຍຫຼືສິ່ງມີອຳນາດ, ໂດຍທົ່ວໄປແລ້ວແມ່ນປະກອບດ້ວຍການເຍົ້າຍວນແລະປຸກເສກ ຣິດຂອງວິຊາອາຄົມ.

3. **ບາບທີ່ກ່ຽວກັບຄວາມສຳພັນ.** ບາບເຫຼົ່ານີ້ແມ່ນບາບທີ່ເຫັນໄດ້ໃນຄວາມສຳພັນຂອງພວກເຮົາ: "ຄວາມກຽດຊັງ, ການຂັດແຍ້ງ, ຄວາມອິດສາ, ຄວາມໂກດແຄ້ນ," ແຕ່ລະບາບເຫຼົ່ານີ້ສ້າງຄວາມຂຸ້ນເຄືອງໃຈໃຫ້ກັບຄົນອື່ນໆ, ສ້າງອຸປະສັກສາຍສຳພັນຕໍ່ຊື່ງກັນແລະກັນ, ແລະທຳລາຍສາຍສຳພັນ.
4. **ບາບຕໍ່ສູ້ຊຸມຊົນ.** ບາບເຫຼົ່ານີ້ລວມໄປເຖິງການເປັນຜູ້ນຳທີ່ບໍ່ເໝາະສົມແລະການແຍກພັກແຍກພວກ. ໂປໂລເລີ້ມຕົ້ນດ້ວຍ "ຄວາມທະເຍີທະຍານໃນສິ່ງທີ່ບໍ່ຈຳເປັນ. ແຕ່ເມື່ອເປັນດັ່ງນັ້ນບຸກຄົນນັ້ນຈະຖືກຄັບເຄື່ອນດ້ວຍຄວາມເຫັນແກ່ຕົວ, ເຫັນແກ່ປະໂຍດສ່ວນຕົວບໍ່ເຫັນເຖິງຄວາມຕ້ອງການຂອງຄົນອື່ນ. "ຄວາມແຕກແຍກ" ແມ່ນເປັນສອງທິດທາງທີ່ເປັນການແບ່ງແຍກຊຸມຊົນ. ຄວາມອິດສາຍັງເປັນການລົບກວນຊຸມຊົນ.
5. **ບາບແຫ່ງຄວາມເສື່ອມເສັຽ.** ໂປໂລໄດ້ເຕືອນວ່າ "ການເມົາເຫຼົ້າ" ແລະ "ການລົ້ລວງ." ຖືກກ່າວເຖິງສາມເທື່ອໃນພຣະຄັມພີໃໝ່ (ໂຣມ 13:13; 1 ເປໂຕ 4:3). ແຕ່ລະຄັ້ງມັນເຊື່ອມໂຍງກັບການດື່ມເຫຼົ້າ. ຊີວິດຂອງການປ່ອຍໄປຕາມໃຈຕົນເອງເປັນຊີວິດທີ່ບໍ່ສອດຄ່ອງກັບຊີວິດຄຣິສຕຽນ.

ໂປໂລໄດ້ມ້ວນທ້າຍດ້ວຍຄວາມລະມັດລະວັງອີກຢ່າງນຶ່ງຕໍ່ກັບ "ສິ່ງທີ່ຄ້າຍຄືກັນ" ເພື່ອເນັ້ນໜັກວ່າລາຍການລົງຊື່ຄວາມບາບຂອງທ່ານຍັງບໍ່ຄົບຖ້ວນ. ເມື່ອໂປໂລກ່າວວ່າ, ທ່ານໄດ້ກຳນົດໃນເງື່ອນໄຂທີ່ບໍ່ແນ່ນອນກ່ຽວກັບຜົນສຸດທ້າຍຂອງ "ການງານຂອງເນື້ອໜັງ." ເນື້ອໜັງນຳໄປສູ່ຄວາມບາບ, ຄວາມຕາຍ, ແລະລົງໄປໃນນາຣົກ, ແຕ່ຄົນທີ່ເປັນຂອງພຣະເຈົ້າບໍ່ໄດ້ດຳເນີນຊີວິດແບບນີ້.

*ແມ່ນຫຍັງທີ່ທ່ານເຫັນໄດ້ຊັດເຈນກ່ຽວກັບບັນຊີການປະພຶດຜິດບາບນີ້?*

## 3. ຄາລາເຕັຽ 5:22-25.

*22 ຝ່າຍຜົນຂອງພຣະວິນຍານນັ້ນຄື ຄວາມຮັກ, ຄວາມຍິນດີ, ສັນຕິສຸກ, ຄວາມອົດກັ້ນໄວ້ນານ, ຄວາມປານີ, ຄວາມດີ, ຄວາມສັດຊື່, 23 ຄວາມສຸພາບອ່ອນຫວານ, ການຮູ້ຈັກບັງຄັບຕົນ ກົດໝາຍທີ່ຫ້າມການຢ່າງນີ້ກໍບໍ່ມີ. 24 ຜູ້ທີ່ຢູ່ຝ່າຍພຣະເຢຊູຄຣິດກໍໄດ້ເອົາຄວາມປາຖະໜາກັບຕັນຫາຂອງມະນຸດທຳມະດານັ້ນ ຄຶງໄວ້ທີ່ໄມ້ກາງແຂນແລ້ວ. 25 ຖ້າພວກເຮົາມີຊີວິດຢູ່ໂດຍພຣະວິນຍານກໍຈົ່ງດຳເນີນຊີວິດໄປຕາມພຣະວິນຍານດ້ວຍ.*

ພວກເຮົາບໍ່ໄດ້ກາຍເປັນຜູ້ຊອບທັມດ້ວຍຄວາມພະຍາຍາມຂອງພວກເຮົາເອງ. ມັນແມ່ນພຣະວິນຍານບໍຣິສຸດເປັນຜູ້ເສີມສ້າງຄຸນສົມບັດຄວາມຊອບທັມໃນຊີວິດຜູ້ເຊື່ອ. ເມື່ອພວກເຮົາຊອກສແວງຫາຊີວິດທີ່ຢູ່ໃນພຣະວິນຍານ, ພຣະອົງຈະເຮັດໃຫ້ເກີດໝາກຜົນໃນຊີວິດຂອງພວກເຮົາທີ່ສະແດງໃຫ້ເຫັນເຖິງລັກສະນະຂອງພຣະບິດາຂອງພວກເຮົາ. ເນື້ອໜັງລົ້ລວງພວກເຮົາໃຫ້ເຮັດຜິດສິນທັມທາງເພດ, ແຕ່ພຣະວິນຍານສ້າງ "ການຮູ້ຈັກຄວບຄຸມຕົນເອງ." ຄົນທີ່ຮູ້ຈັກຄວບຄຸມຕົນເອງໄດ້ຫຼີກລ້ຽງການຕັດສິນໃຈແບບໄຮ້ປໂຍດແລະໃຈໂມໂຫຮ້າຍ. ເນື້ອໜັງໄດ້ລົ້ລວງພວກເຮົາໃຫ້ເຮັດການບໍ່ສັດຊື່ທາງຝ່າຍວິນຍານ, ແຕ່ພຣະວິນຍານບໍຣິສຸດຜລິດ "ຄວາມສັດຊື່." ໃຫ້ເຮົາເຮັດຕາມຢ່າງພຣະເຢຊູດ້ວຍຄວາມສັດຊື່ເພາະຄວາມຮັກທີ່ເຮົາມີຕໍ່ພຣະອົງ. ເນື້ອໜັງຊັກຈູງພວກເຮົາໃຫ້ເຮັດບາບທີ່ກ່ຽວຂ້ອງກັບຄວາມອິດສາ, ການຂັດແຍ້ງ, ແລະຄວາມໃຈຮ້າຍ, ແຕ່ພຣະວິນຍານໄດ້ສ້າງ "ຄວາມຮັກ", "ຄວາມອົດທົນ," ແລະ "ຄວາມເມດຕາ." ຄວາມອົດທົນໝາຍຄວາມວ່າພວກເຮົາຈະບໍ່ມີໃຈຮ້າຍງ່າຍ. ຄວາມເມດຕາແມ່ນການກະທຳຂອງການປະຕິບັດຕໍ່ຜູ້ອື່ນເໝືອນກັບທີ່ພວກເຮົາຕ້ອງການໃຫ້ຄົນອື່ນປະຕິບັດຕໍ່ເຮົາ. ໃນຂນະທີ່ງານຂອງເນື້ອໜັງໄດ້ທຳລາຍສາຍພົວພັນ, ຝ່າຍຜົນຂອງພຣະວິນຍານຈະເສີມຂະຫຍາຍຄວາມສຳພັນອັນດີ.

ເນື້ອໜັງລົ້ລວງພວກເຮົາໃຫ້ເຮັດບາບຕໍ່ສູ້ຊຸມຊົນເຊັ່ນຄວາມເຫັນແກ່ຕົວແລະຄວາມແຕກແຍກ, ແຕ່ພຣະວິນຍານໄດ້ສ້າງ "ຄວາມສງົບ." ເມື່ອຄວາມຂັດແຍ້ງເກີດຂຶ້ນ, ເນື້ອໜັງຈະສ້າງຄວາມຂັດແຍ້ງ, ແຕ່ພຣະວິນຍານຈະນຳຄວາມສງົບມາໃຫ້ທັງຢູ່ພາຍໃນຜູ້ເຊື່ອແລະໃນລະຫ່ວາງພວກເຂົາດ້ວຍ. ເນື້ອໜັງຊັກຊວນໃຫ້ພວກເຮົາເຮັດບາບຂອງການເມົາເຫຼົ້າແລະການດື່ມຢ່າງໜັກ, ແຕ່ພຣະວິນຍານ

ສ້າງ “ຄວາມສຸກ”, “ຄວາມດີ,” ແລະ “ຄວາມອ່ອນສຸພາບ.” ຄວາມຊົມຊື່ນຍິນດີເປັນຄວາມຍິນດີທີ່ມາຈາກການຮູ້ຈັກພຣະເຈົ້າ. ຂ້າພະເຈົ້ານັກວິທີທີ່ ຕີໂມທີ ຈອດຈ໌ (Timothy George) ໃຫ້ຄໍານິຍາມ “ຄວາມດີ.” ແລະ “ຄວາມອ່ອນສຸພາບ”: ຄວາມດີແມ່ນ “ຄວາມຄິດຂອງຄວາມເມດຕາແລະຄວາມເອື້ອເຟື້ອເພື່ອແຜ່” ແລະຄວາມອ່ອນສຸພາບແມ່ນ “ຈິດໃຈທີ່ອ່ອນໂຍນແລະສາມາດສິດສອນໄດ້ໃນພຣະເຈົ້າ. “ເນື້ອໜັງຊອກຫາວິທີລໍ້ລວງເພື່ອເຮັດໃຫ້ມີຄວາມຮູ້ສຶກດີ, ແຕ່ພຣະວິນຍານເຮັດໃຫ້ພວກເຮົາມີຄວາມຮູ້ສຶກດີທີ່ແທ້ຈິງ. ຊີວິດຄຣິສຕຽນກ່ຽວຂ້ອງກັບການເລືອກເດີນໃນພຣະວິນຍານ, ຊຶ່ງໝາຍຄວາມວ່າບໍ່ເຮັດໃຫ້ຄວາມປາຖນາຂອງເນື້ອໜັງຂອງພວກເຮົາ ເມື່ອເຮົາເຮັດສິ່ງນີ້ທຸກວັນ, ພຣະວິນຍານຈະສ້າງສ່ວນທີ່ເປັນຄຸນສົມບັດຂອງພຣະເຈົ້າພາຍໃນຕົວເຮົາ. ພຣະອົງໄດ້ນໍາພາພວກເຮົາອອກຈາກຄວາມປາຖນາຂອງເນື້ອກາຍແລະເຮັດໃຫ້ພວກເຮົາເຕີບໂຕທາງຝ່າຍວິນຍານ.

## ການນໍາໃຊ້ໃນຊີວິດ

ພຣະວິນຍານບໍຣິສຸດຊ່ວຍນໍາພາພວກເຮົາໃຫ້ສະທ້ອນໃຫ້ເຫັນໝາກຜົນຄຸນລັກສະນະຂອງພຣະເຈົ້າ. ເລືອກເອົານຶ່ງຂໍ້ຂອງການນໍາໃຊ້ໃນຊີວິດຕໍ່ລົງໄປນີ້:

- **ປະເມີນການເດີນຂອງທ່ານ.** ກວດເບິ່ງຊີວິດຂອງທ່ານໃນແຕ່ລະແງ່ທີ່ບ່ອນທ່ານໄດ້ຕິດຕາມເນື້ອໜັງ. ສາລະພາບບາບເຫຼົ່ານັ້ນ, ຫັນໜີຈາກການບາບນັ້ນແລະຂໍໃຫ້ພຣະເຈົ້າຊ່ວຍເຕີ່ມເຕັມທ່ານດ້ວຍພຣະວິນຍານບໍຣິສຸດຂອງພຣະອົງ.
- **ໃຊ້ເວລາ.** ການເດີນໂດຍພຣະວິນຍານແມ່ນຮຽກຮ້ອງໃຫ້ມີການຈັດເວລາໃຫ້ກັບພຣະອົງ. ກໍານົດເວລາແລະສະຖານທີ່ທີ່ທ່ານສາມາດພົບກັບພຣະເຈົ້າໄດ້ໃນແຕ່ລະວັນ. ເຮັດໃຫ້ມັນເປັນນິສັຍທີ່ຈະບໍ່ຢຸດໆຢ່ອນໆໃນການໃຊ້ເວລາກັບພຣະເຈົ້າທຸກວັນ. ບັນທຶກການທໍາງານຂອງພຣະວິນຍານໃນຊີວິດຂອງທ່ານ.
- **ຈົ່ງຈັດລະບຽບຄວາມຄິດຂອງທ່ານໃໝ່.** ການເດີນໃນພຣະວິນຍານໝາຍຄວາມວ່າພວກເຮົາ “ເອົາທຸກຄວາມຄິດຢູ່ພາຍໃຕ້ການເຊື່ອຟັງພຣະຄຣິດ” (2 ໂກຣິນໂທ 10:5ຂ) ເລີ້ມຕົ້ນເຮັດໃຫ້ມີນິສັຍຂອງການເພິ່ງພາໃນພຣະວິນຍານ, ດັ່ງນັ້ນຄວາມຄິດຂອງທ່ານແມ່ນການໃຫ້ກຽດພຣະຄຣິດ. ຈົ່ງທ່ອງຈໍາຟີລິບປອຍ 4:8: “ພີ່ນ້ອງທັງຫຼາຍເອີຍ, ໃນທີ່ສຸດນີ້, ສິ່ງໃດທີ່ສັດຈິງ, ສິ່ງໃດທີ່ໜ້ານັບຖື, ສິ່ງໃດທີ່ຍຸດຕິທັມ, ສິ່ງໃດທີ່ບໍຣິສຸດ, ສິ່ງໃດທີ່ໜ້າຮັກ, ສິ່ງໃດທີ່ໜ້າຍິນດີ. ສິ່ງໃດທີ່ລໍ້າເລີດແລະຖ້າມີສິ່ງໃດທີ່ຄວນແກ່ການສັຣເສີນຈົ່ງພິຈາຣະນາເຖິງສິ່ງເຫຼົ່ານັ້ນ.

ພວກເຮົາທັງໝົດຢາກເປີດປຸ່ມຂຶ້ນແລະມີລັກສະນະຂອງພຣະເຈົ້າ. ແຕ່ການເດີນກັບພຣະເຈົ້າແມ່ນການມີຊີວິດທີ່ຫຼາຍໄປກ່ວານັ້ນ. ເພື່ອຈະດໍາເນີນຊີວິດດ້ວຍຄຸນສົມບັດທີ່ຖືກຕ້ອງນີ້. ພວກເຮົາຕ້ອງໄດ້ຮັບການປ່ຽນແປງໂດຍພຣະເຈົ້າຈາກພາຍໃນສູ່ພາຍນອກ, ທຸກໆວັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສໍາພັນ** https://ulsb.org/sunday-school-2/ **ແປໂດຍ VR.**